ພັກປະຊາຊົນປະຕິວັດລາວ

# ມະຕິ

## ກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ສາລະວັນ ເປີດກວ້າງ ຄັ້ງທີ 18 ສະໄໝທີ IX

ວັນທີ 23 ເມສາ 2025

ສະແກນດ້ວຍ CamScanner

# ມະຕິ

## ກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ເປີດກວ້າງ ຄັ້ງທີ 18 ສະໄໝທີ IX

ກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ເປີດກວ້າງ ຄັ້ງທີ 18 ສະໄໝທີ IX ໄດ້ດຳເນີນຢ່າງເປັນທາງການ ໃນວັນທີ 23 ເມສາ 2025 ທີ່ສະໂມສອນແຂວງ ໂດຍພາຍໃຕ້ການເປັນປະທານຂອງສະຫາຍ ປອ ດາວວົງ ພອນແກ້ວ ກຳມະການສູນກາງພັກ, ເລຂາພັກແຂວງສາລະວັນ, ມີບັນດາສະຫາຍຮອງເລຂາພັກແຂວງ, ຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ເລຂາພັກເມືອງ, ເລຂາຄະນະພັກຮາກຖານ, ໜ່ວຍພັກພະແນກການ - ອົງການອ້ອມຂ້າງແຂວງ, ເຂົ້າຮ່ວມທັງໝົດ 72 ທ່ານ, ຍິງ 6 ທ່ານ.

I. ກອງປະຊຸມຄັ້ງນີ້: ໄດ້ຕີລາຄາການນຳພາຮອບດ້ານຂອງຄະນະບໍລິຫານງານພັກແຂວງ ໃນໄລຍ 3 ເດືອນຕົ້ນປີ 2025 ຜ່ານມາ ເພື່ອວາງທິດທາງແຜນການ 9 ເດືອນ ແລະ ແຜນວຽກຈຸດສຸມ 3 ເດືອນ ( 4, 5, 6) ປີ 2025 ຕິດພັນກັບການປະເມີນການຈັດຕັ້ງປະຕິບັດມະຕິກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ຄັ້ງທີ 17 ສະໄໝທີ IX; ພ້ອມນີ້, ຍັງໄດ້ຮັບຟັງການລາຍງານຜົນສຳເລັດການດຳເນີນກອງປະຊຸມໃຫຍ່ອົງຄະນະພັກ 8 ເມືອງ ແລະ ການຜັນຂະຫຍາຍມະຕິຂອງຄະນະບໍລິຫານງານສູນກາງພັກ ເລກທີ 03/ຄບສພ, ລົງວັນທີ 12 ມີນາ 2025, ຄຳແນະນຳຂອງຄະນະເລຂາທິການສູນກາງພັກ ເລກທີ 483/ຄລສພ, ລົງວັນທີ 04 ເມສາ 2025 ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ; ລາຍງານການກະກຽມກອງປະຊຸມໃຫຍ່ ຄັ້ງທີ X ຂອງອົງຄະນະພັກແຂວງ; ລາຍງານການຈັດຕັ້ງປະຕິບັດພາຍຫຼັງສຳເລັດກອງປະຊຸມໃຫຍ່ຂອງອົງຄະນະພັກເມືອງ (ການແບ່ງຄວາມຮັບຜິດຊອບໃຫ້ຄະນະບໍລິຫານງານພັກເມືອງ ແລະ ໂຄງການດຳເນີນງານ 5 ປີ ຂອງເມືອງ) ແລະ ລາຍງານຂໍ້ມູນ, ຄວາມກຽມພ້ອມໃນການສ້າງຕາແສງໃນທົ່ວແຂວງສາລະວັນ.

II. ເນື້ອໃນການຕີລາຄາ ເຫັນວ່າ: ໃນໄລຍະ 3 ເດືອນຕົ້ນປີ 2025 ໂດຍລວມສະພາບການຂອງໂລກໄດ້ປະເຊີນໜ້າກັບບັນຫາເສດຖະກິດ, ສົງຄາມການຄ້າລະຫວ່າງປະເທດມະຫາອຳນາດ, ເຊິ່ງເຮັດໃຫ້ພາຍໃນປະເທດ ກໍຄື ພາຍໃນແຂວງສາລະວັນ ຂອງພວກເຮົາ ຍັງສືບຕໍ່ປະເຊີນໜ້າຢ່າງໜັກໜ່ວງ ກັບສະພາບການທາງດ້ານເສດຖະກິດ - ການເງິນ ແລະ ປະກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນ: ບັນຫາເງິນກີບອ່ອນຄ່າ, ລາຄາສິນຄ້າແພງ, ໄພພິບັດທຳມະຊາດ, ພະຍາດລະດູການ, ຢາເສບຕິດ, ອຸປະຕິເຫດ, ຄ້າຂາຍເຖື່ອນ, ລັກລອບຕັດໄມ້, ບັນຫາສາສະໜາ, ຂໍ້ລັກງັດແງະ ແລະ ອື່ນໆ.

ແຕ່ພາຍໃຕ້ການນຳພາ-ຊີ້ນຳ ຂອງຄະນະບໍລິຫານງານພັກແຂວງ ສະໄໝທີ IX ແລະ ຄະນະພັກຂັ້ນຕ່າງໆ ເຮັດໃຫ້ສາມາດຜ່ານຜ່າ ແລະ ແກ້ໄຂບັນຫາໄດ້ໂດຍພື້ນຖານ ແລະ ຍາດໄດ້ຜົນສຳເລັດຫຼາຍດ້ານ ເປັນຕົ້ນ: ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ; ປະຕິບັດການລົງທຶນໄດ້ທັງໝົດ 577 ຕື້ກວ່າກີບ, ເທົ່າກັບ 31,53% ຂອງແຜນການປີ; ຈັດເກັບລາຍຮັບໄດ້ 76,98 ຕື້ກີບ ເທົ່າກັບ 28,02% ຂອງແຜນການປີ; ປະຕິບັດລາຍຈ່າຍໄດ້ 169,03 ຕື້ກີບ ເທົ່າກັບ 26,97% ຂອງແຜນການປີ, ປູກເຂົ້ານາແຊງ ໄດ້ 13,586 ເຮັກຕາ, ເທົ່າກັບ 97 % ຂອງແຜນການ; ພືດສະບຽງອາຫານ ໄດ້ 3.652 ເຮັກຕາ, ຜົນຜະລິດ 29.747 ໂຕນ; ສົ່ງອອກສິນຄ້າໄດ້ທັງໝົດ 657 ຕື້ກີບ; ໄດ້ເອົາໃຈໃສ່ບູລະນະຮັກສາ, ກໍ່ສ້າງ - ສ້ອມແປງ ເສັ້ນທາງທີ່ເປ່ເພ ເປັນປົກກະຕິ; ສຳຫຼວດ - ວັດແທກ ສ້າງຖານສຳມະໂນທີ່ດິນ ແລະ ອອກໃບຕາດິນ ໄດ້ 469 ຕອນ; ປະຕິບັດການຮຽນ - ການສອນ ຢ່າງເປັນປົກກະຕິ; ເອົາໃຈໃສ່ໃນການຕິດຕາມ ແລະ ປິ່ນປົວພະຍາດ, ຍົກລະດັບຄວາມຮູ້ໃຫ້ແພດໝໍ; ສະໜອງຢາປິ່ນປົວພະຍາດ ຢ່າງພຽງພໍ; ປະກາດບ້ານວັດທະນະທຳໄດ້ 22 ບ້ານ; ປະກາດຮັບຮອງພະທາດກະເດົາທຶກ ບ້ານນາໂຄກ ເມືອງຄົງເຊໂດນ ເປັນມໍລະດົກແຫ່ງຊາດປະຈຳທ້ອງຖິ່ນ; ເອົາໃຈໃສ່ຝຶກ ແລະ ພັດທະນາສີມືແຮງງານໃຫ້ມີຄວາມຮູ້, ມີຄວາມສາມາດ ໄດ້ 262 ຄົນ; ຈັດຫາວຽກເຮັດງານທຳ ໄດ້ 400 ຄົນ; ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານຄວາມດີ ຕໍ່ປະເທດຊາດ ຈຳນວນ 68 ທ່ານ ເປັນເງິນ 1,6 ຕື້ກີບ; ປັບປຸງສັບຊ້ອນຈັດວາງພະນັກງານ ບັນດາພະແນກການ - ອົງການອ້ອມຂ້າງແຂວງ ແລະ ເມືອງ ໄປຕາມແຜນກຳນົດພະນັກງານນຳພາ - ຄຸ້ມຄອງຂອງແຕ່ລະຂັ້ນ; ພົວພັນແບບພິເສດ - ຮ່ວມມືຮອບດ້ານ ກັບບັນດາແຂວງຕ່າງໆຂອງ ສສ ຫວຽດນາມ ແລະ ພົວພັນຮ່ວມມື ກັບ ຈັງຫວັດ ອຸບົນ ຣາຊະທານີ ຂອງໄທ ກໍຄື ອົງການຈັດຕັ້ງສາກົນອື່ນໆ ຢ່າງເປັນປົກກະຕິ; ເອົາໃຈໃສ່ຜັນ



ສະແກນດ້ວຍ CamScanner

ຂະຫຍາຍວຽກງານ 3 ສ້າງເຂົ້າສູ່ລວງເລິກ ຕິດພັນກັບການປັກສຽບົດບາດຄວາມເປັນເຈົ້າໃນການບໍລິຫານລັດທຸກຂັ້ນ, ປັບປຸງແບບແຜນວິທີເຮັດວຽກ ຕາມທິດເພີ່ມວຽກ - ເພີ່ມຄວາມຮັບຜິດຊອບໃຫ້ຮາກຖານສູງຂຶ້ນ; ຕິດຕາມ, ກວດກາ ແລະ ຄົ້ນຄ້ວາແກ້ໄຂຄຳຮ້ອງ - ຄຳສະເໜີຂອງພະນັກງານ ແລະ ປະຊາຊົນ; ກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ ແລະໜັກແໜ້ນ ໄດ້ທັງປະລິມານ ແລະ ຄຸນນະພາບ; ປະຕິບັດວຽກງານກວດກາລັດຢ່າງເຂັ້ມງວດ ດ້ວຍການຕິດຕາມ, ເກັບກຳຂໍ້ມູນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ຢ່າງເປັນປົກກະຕິ.

**III.** ກອງປະຊຸມໄດ້ຮັບຮອງເອົາທິດທາງແຜນການ 9 ເດືອນ ແລະ ແຜນວຽກຈຸດສຸມ 3 ເດືອນ **(4, 5, 6)** ປີ **2025** ດັ່ງນີ້:

ກ. ທິດທາງ, ແຜນການ ນຳພາຮອບດ້ານ 9 ເດືອນ ປີ **2025.**

1. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ສືບຕໍ່ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານຂອງພັກ; ຕ້ານ ແລະ ແກ້ໄຂປະກົດການຫຍໍ້ທໍ້ ທີ່ເກີດຂຶ້ນໃນສັງຄົມ; ສ້າງແຜນປ້ອງກັນເວນຍາມຕາມສຳນັກງານ - ອົງການ, ຈຸດສຸມສຳຄັນຕ່າງໆ ເພື່ອກະກຽມໃສ່ງານບຸນສຳຄັນຕ່າງໆຂອງຊາດ - ຂອງພັກ ຮັບປະກັນຄວາມສະຫງົບ - ປອດໄພ ໃຫ້ໄດ້ 100%.

2. ວຽກງານເສດຖະກິດ

- ສູ້ຊົນເຮັດໃຫ້ເສດຖະກິດຂະຫຍາຍຕົວເພີ່ມຂຶ້ນສະເລ່ຍ ໃນລະດັບ 6,5% ຂຶ້ນໄປ, ຄິດເປັນມູນຄ່າຕາມລາຄາໃນປີ ໃຫ້ບັນລຸ 9.215 ຕື້ກີບ, GDP ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 19,21 ລ້ານກວ່າກີບ. ສູ້ຊົນລະດົມທຸກແຫຼ່ງທຶນເພື່ອສຸມໃສ່ໃນການພັດທະນາ ໃຫ້ໄດ້ປະມານ 1.428 ຕື້ກີບ.

- ສູ້ຊົນຈັດເກັບລາຍຮັບ 9 ເດືອນທ້າຍປີ 2025 ໃຫ້ໄດ້ 197,81 ຕື້ກີບ; ຫັນການຈັດເກັບລາຍຮັບເຂົ້າສູ່ລະບົບທັນສະໄໝ; ປະຕິບັດລາຍຈ່າຍໃຫ້ຢູ່ໃນລະດັບ 457,63 ຕື້ກີບ, ເບີກຈ່າຍເງິນເດືອນ, ເງິນອຸດໜູນໃຫ້ເປັນປົກກະຕິ.

- ສູ້ຊົນເຮັດໃຫ້ມູນຄ່າການສົ່ງອອກບັນລຸໄດ້ 863 ຕື້ກີບ, ມູນຄ່າການນຳເຂົ້າໃຫ້ຫຼຸດລົງ ຢູ່ໃນລະດັບ 149 ຕື້ກີບ.

- ຊຸກຍູ້ການຜະລິດເຂົ້າໃຫ້ໄດ້ 95.400 ເຮັກຕາ, ຜົນຜະລິດໃຫ້ໄດ້ 418.502 ໂຕນ; ສືບຕໍ່ເຂັ້ມງວດສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນການບຸກລຸກທຳລາຍປ່າໄມ້ ຕາມຄຳສັ່ງ 15/ນຍ ແລະ ຄຳສັ່ງ 11/ນຍ ຢ່າງແຂງແຮງ.

- ສືບຕໍ່ສົມທົບພາກສ່ວນກ່ຽວຂ້ອງສຸມທຶນຮອນເຂົ້າໃນການຍົກລະດັບເສັ້ນທາງຕ່າງໆ ໃຫ້ດີຂຶ້ນ; ຄຸ້ມຄອງ-ຕິດຕາມ ກວດການ້ຳໜັກລົດບັນທຸກໃຫ້ຖືກຕ້ອງຕາມລະບຽບຂອງກະຊວງ ຍທຂ.

- ສຳຫຼວດ-ວັດແທກອອກໃບຕາດິນ ໃຫ້ໄດ້ 5.000 ຕອນ ຂຶ້ນໄປ; ສ້າງສຳມະໂນທີ່ດິນໃຫ້ໄດ້ 10.000 ຕອນຂຶ້ນໄປ; ພ້ອມທັງສືບຕໍ່ທົບທວນ ບົດລາຍງານສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ໂຄງການຕ່າງໆພາຍໃນແຂວງ ຢ່າງເປັນປົກກະຕິ.

- ສືບຕໍ່ຈັດຕັ້ງປະຕິບັດໂຄງການກໍ່ສ້າງຕາຂ່າຍໄຟຟ້າແຮງກາງ, ແຮງຕ່ຳ ແລະ ຕິດຕັ້ງໝໍ້ແປງ (ໂຄງການລົງທຶນຂອງລັດ) ທີ່ມີໃນແຜນປີ 2025; ຄົ້ນຄ້ວາສະໜອງໄຟຟ້າໃຫ້ພຽງພໍກັບຄວາມຕ້ອງການ; ເອົາໃຈໃສ່ຄຸ້ມຄອງບັນດາບໍລິສັດທີ່ດຳເນີນກິດຈະການດ້ານບໍ່ແຮ່ໃນທົ່ວແຂວງ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນຕາມຂັ້ນຕອນ ແລະ ບົດວິພາກເສດຖະກິດ - ເຕັກນິກ ກໍຄື ລະບຽບກົດໝາຍຢ່າງເຂັ້ມງວດ.

- ສືບຕໍ່ເຄື່ອນໄຫວຝຶກອົບຮົມການຄຸ້ມຄອງແລະນຳໃຊ້ລະບົບເທັກໂນໂລຊີທີ່ທັນສະໄໝເຂົ້າໃນການບໍລິຫານລັດ; ປະຕິບັດແຜນງານຫັນເປັນດີຈີຕ້ອນຂອງແຂວງ ໃຫ້ປະກົດຜົນເປັນຈິງ; ຕິດຕາມ, ກວດກາຈຳນວນບ້ານທີ່ບໍ່ມີສັນຍານມືຖື ເພື່ອຂະຫຍາຍເຄືອຄ່າຍ; ອອກອະນຸຍາດສາຂາບໍລິສັດທີ່ໃຫ້ບໍລິການດ້ານໄປສະນີ ພ້ອມທັງເກັບກຳຂໍ້ມູນສະຖິຕິການບໍລິການ ຢ່າງເປັນປົກກະຕິ. ສືບຕໍ່ເກັບກຳຂໍ້ມູນຖານລາຍຮັບດ້ານຕ່າງໆໃນທົ່ວແຂວງ ເພື່ອນຳເຂົ້າສູ່ລະບົບຖານຂໍ້ມູນທີ່ທັນສະໄໝ ໃຫ້ສະດວກໃນການຕິດຕາມ, ກວດກາ.



ສະແກນດ້ວຍ CamScanner

3. ວຽກງານວັດທະນະທຳ - ສັງຄົມ

- ສືບຕໍ່ຕິດຕາມການຈັດຕັ້ງການຮຽນ-ການສອນ ສົກຮຽນ 2024-2025 ແລະ ວາງແຜນການຮຽນ ປີ 2025-2026; ແກ້ໄຂການຂາດແຄນຄູສອນ ແລະ ນັກຮຽນປະລະການຮຽນໃຫ້ຫຼຸດລົງ; ພ້ອມທັງປົກປັກຮັກສາ ໂຮງຮຽນ, ອຸປະກອນການຮຽນ, ການສອນ ໃນໄລຍະພັກປິຮຽນ ຂອງໂຮງຮຽນແຕ່ງຕ່າງໆ.

- ສືບຕໍ່ເອົາໃຈໃສ່ເຝົ້າລະວັງ ແລະ ຄວບຄຸມພະຍາດຕິດຕໍ່ຈາກສັດສູ່ຄົນ; ປັບປຸງຕາໜ່າງບໍລິການໃນແຕ່ລະ ດ້ານໃຫ້ມີຄຸນນະພາບສູງຂຶ້ນ; ນຳໃຊ້ອຸປະກອນ ແລະ ເທັກໂນໂລຊີທັນສະໄໝ ຢ່າງເປັນລະບົບ; ສະໜອງຢາປົວ ພະຍາດໃຫ້ພຽງພໍ;

- ສູ້ຊົນຜະລິດຂ່າວໃຫ້ໄດ້ 3.830 ຂ່າວ; ສ້າງຄອບຄົວວັດທະນະທຳໃຫ້ໄດ້ 1.900 ຄອບຄົວ, ບ້ານ ວັດທະນະທຳໃຫ້ໄດ້ 8 ບ້ານ; ຄຸ້ມຄອງສະຖານບັນເທີງ, ຮ້ານອາຫານ, ບ້ານພັກ, ໂຮງແຮມ ໃຫ້ໄດ້ມາດຖານ ສາມາດ ຕອບສະໜອງການບໍລິການໄດ້ຢ່າງພຽງພໍ; ປັບປຸງສະຖານທີ່ທ່ອງທ່ຽວ ໃຫ້ມີຄວາມສວຍງາມ ເພື່ອດຶງດູດນັກທ່ອງທ່ຽວ ໃຫ້ໄດ້ 93.258 ເທື່ອຄົນ.

- ສືບຕໍ່ຝຶກ ແລະ ພັດທະນາສີມືແຮງງານ ໃຫ້ໄດ້ 2.889 ຄົນ; ຄຸ້ມຄອງແຮງງານຕາມລະບຽບການ; ຊຸກຍູ້ວຽກ ງານຂະຫຍາຍຕາໜ່າງປະກັນສັງຄົມໃຫ້ຄວບຄຸມຫຼາຍຂຶ້ນ ພ້ອມທັງປະຕິບັດນະໂຍບາຍປະກັນສັງຄົມໃຫ້ສອດຄ່ອງກັບ ລະບຽບກົດໝາຍ ແລະ ທັນການ; ເອົາໃຈໃສ່ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດ ປະຕິບັດຊາດ ປະຊາທິປະໄຕ ໃຫ້ໄດ້ 739 ທ່ານ; ຕິດຕາມ ແລະ ໃຫ້ການຊ່ວຍເຫຼືອຜູ້ປະສົບໄພພິບັດໃນຊ່ວງລະດູຝົນ ໃຫ້ ທັນການ. ສືບຕໍ່ຊອກຫາຈຸດຫຼັກຖານລະເບີດບໍ່ທັນແຕກໃຫ້ໄດ້ 12 ບ້ານ ແລະ ສຳຫຼວດແບບວິຊາການ ເພື່ອການົດພື້ນທີ່ ລະເບີດບໍ່ທັນແຕກຕົກຄ້າງໃຫ້ໄດ້ 700 ເຮັກຕາ ແລະ ເກັບກູ້ລະເບີດບໍ່ທັນແຕກໃຫ້ໄດ້ 385 ເຮັກຕາ.

4. ວຽກງານນິຕິບັນຍັດ, ຕຸລາການ ແລະ ບູລະນະກິດຈັກລັດ, ອົງການປົກຄອງ

- ຈັດຕັ້ງເຄື່ອນໄຫວເຜີຍແຜ່ບັນດາມະຕິຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໃຫ້ປະຊາຊົນຢ່າງ ທົ່ວເຖິງ; ຄົ້ນຄ້ວາພິຈາລະນາ ຮັບຮອງເອົານິຕິກຳໃຕ້ກົດໝາຍ ແລະ ບັນຫາສຳຄັນຕ່າງໆຂອງອົງການປົກຄອງແຂວງ ຕາມຂອບເຂດສິດ; ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 9, ທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ II.

- ສືບຕໍ່ຍົກສູງຄຸນນະພາບ ການຕິດຕາມ, ກວດກາ ການປະຕິບັດກົດໝາຍ ແລະ ການສັ່ງຟ້ອງຄະດີ ໂດຍສູ້ຊົນ ການແກ້ໄຂຄຳຮ້ອງ ແລະ ແກ້ໄຂຄະດີ ໃຫ້ບັນລຸ 95%, ຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ ສານຢ່າງເຂັ້ມງວດ.

- ເພີ່ມທະວີວຽກງານຍຸຕິທຳ ໂດຍການໂຄສະນາ ເຜີຍແຜ່ກົດໝາຍ; ປັບປຸງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ໃຫ້ ໄດ້ຕາມແຜນ; ຝຶກອົບຮົມກົດໝາຍໄລຍະສັ້ນ 45 ວັນໃຫ້ຮາກຖານບ້ານ ແລະ ພະນັກງານຂັ້ນເມືອງ ໃຫ້ໄດ້ເມືອງລະ 01 ຊຸດ; ຊຸກຍູ້ການສ້າງນິຕິກຳໃຕ້ກົດໝາຍ ໄລຍະ 2026-2030 ໃຫ້ສຳເລັດ; ປະຕິບັດວຽກທະບຽນສານ ແລະ ປະຕິບັດຄຳຕັດສິນຂອງສານ ໃຫ້ຮັບປະກັນຄວາມຖືກຕ້ອງ.

5. ວຽກງານແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ.

- ສືບຕໍ່ເອົາໃຈໃສ່ຊຸກຍູ້ວຽກງານແນວລາວສ້າງຊາດໃນທົ່ວແຂວງ ໃຫ້ໄດ້ປະກາດນາມມະຍົດ ເປັນຄອບຄົວ ສາມັກຄີປອງດອງ ແລະ ຊຸກຍູ້ໃຫ້ເມືອງຂະຫຍາຍສ້າງກອງທຶນພັດທະນາຂັ້ນບ້ານໃຫ້ຫຼາຍຂຶ້ນ; ກະກຽມດຳເນີນກອງ ປະຊຸມໃຫຍ່ ຄັ້ງທີVII ຂອງອົງການແນວລາວສ້າງຊາດແຂວງ ໃຫ້ສຳເລັດຕາມແຜນ;

- ສືບຕໍ່ເກັບກຳສະຖິຕິສະມາຊິກນັກຮົບເກົ່າ; ຄົ້ນຄ້ວາເກັບກຳຂໍ້ມູນຕ່າງໆຂອງຂະແໜງການຕົນ ເພື່ອປະກອບ ເຂົ້າໃສ່ຮ່າງລາຍງານການເມືອງທັງສອງພາກ, ເອກະສານຮັບໃຊ້ກອງປະຊຸມໃຫຍ່ ແລະ ເປີດກອງປະຊຸມໃຫຍ່ ຄັ້ງທີ V ໃຫ້ສຳເລັດຕາມແຜນ.



ສະແກນດ້ວຍ CamScanner

- ຊຸກຍູ້ ຕິດຕາມ ກວດກາການປະຕິບັດ ຂໍ້ແຂ່ງຂັນ 3 ດີ; ສ້າງຄອບຄົວ, ບ້ານແມ່ຍິງ 3 ດີ ຕິດພັນກັບການສ້າງບ້ານພັດທະນາຕາມທິດສາມສ້າງ; ຂະຫຍາຍສະມາຊິກແມ່ຍິງຢູ່ຂັ້ນແຂວງ, ເມືອງ, ບ້ານ ກວມ 20% ຂອງແມ່ຍິງໃນເກນອາຍຸ; ເປີດກອງປະຊຸມໃຫຍ່ ຄັ້ງທີ VII ຂອງຕົນ ໃຫ້ສຳເລັດຕາມແຜນ.

- ສືບຕໍ່ລົງຊຸກຍູ້ໜ່ວຍຊາວໜຸ່ມອ້ອມຂ້າງແຂວງ ແລະ ເມືອງ ໃນການຈັດຕັ້ງຂໍ້ແຂ່ງຂັນ 4 ບຸກ; ກວດກາວຽກງານອະນຸຊົນ - ເຍົາວະຊົນທັນວາ ໃນ 8 ຕົວເມືອງ ແລະ ໂຮງຮຽນອ້ອມຂ້າງແຂວງ ໃຫ້ໄດ້ 8 ຄັ້ງ (ເມືອງລະຄັ້ງ); ເປີດກອງປະຊຸມໃຫຍ່ ຄັ້ງທີ VII ຂອງຕົນ ໃຫ້ສຳເລັດຕາມແຜນ.

- ສືບຕໍ່, ຕິດຕາມ, ຊຸກຍູ້ການເຄື່ອນໄຫວວຽກງານກຳມະບານໃນແຕ່ລະຂັ້ນ; ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ຂອງສະຫະພັນກຳມະບານລາວ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ; ເປີດກອງປະຊຸມໃຫຍ່ ຄັ້ງທີ VII ຂອງຕົນ ໃຫ້ສຳເລັດຕາມແຜນ.

**6. ວຽກງານການຕ່າງປະເທດ**

ສືບຕໍ່ຜັນຂະຫຍາຍເນື້ອໃນບົດບັນທຶກຄວາມຊົງຈຳລະຫວ່າງແຂວງສາລະວັນ ກັບບັນດາແຂວງ ຂອງ ສສ ຫວຽດນາມ ທີ່ໄດ້ລົງນາມໄວ້ແລ້ວ ໃຫ້ປະກົດຜົນເປັນຈິງ; ຕິດຕາມການເຄື່ອນໄຫວຂອງບັນດາໂຄງການຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ. ກະກຽມເນື້ອໃນເຂົ້າຮ່ວມກອງປະຊຸມຄະນະກຳມະການຮັກສາຄວາມສະຫງົບຮຽບຮ້ອຍຕາມບໍລິເວນຊາຍແດນ (ສາລະວັນ-ອຸບົນ ຣາຊະທານີ ) ຄັ້ງທີ 14 ທີ່ ຈັງຫວັດ ອຸບົນຣາຊະທານີ ເປັນເຈົ້າພາບ.

**7. ວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ວຽກງານ 3 ສ້າງ**

- ສືບຕໍ່ຍົກສູງຄວາມສາມາດນຳພາຂອງຄະນະພັກ ແລະ ອົງການປົກຄອງແຕ່ລະຂັ້ນ ຕໍ່ວຽກງານກໍ່ສ້າງຮາກຖານການເມືອງ ຢ່າງແຂງແຮງ, ຕິດຕາມການຫັນພະນັກງານລົງກໍ່ສ້າງຮາກຖານຢູ່ເມືອງຢ່າງເປັນປົກກະຕິ ເພື່ອກະກຽມເນື້ອໃນ ສະຫຼຸບການຈັດຕັ້ງປະຕິບັດວຽກງານຫັນພະນັກງານລົງກໍ່ສ້າງຮາກຖານການເມືອງ ທົ່ວແຂວງ.

- ສູ້ຊົນລຶບລ້າງຄອບຄົວທຸກຍາກ ໃຫ້ໄດ້ 600 ຄອບຄົວ ກວມເອົາ 0,82%, ບ້ານທຸກຍາກ ໃຫ້ໄດ້ 20 ບ້ານ ກວມເອົາ 3,46%, ລຶບລ້າງເມືອງທຸກຍາກ ໃຫ້ໄດ້ 01 ເມືອງ ຄື: ເມືອງສະໝ້ອຍ; ສ້າງຄອບຄົວພັດທະນາໃຫ້ໄດ້ 1.930 ຄອບຄົວ ກວມເອົາ 2,64 %, ສ້າງບ້ານພັດທະນາໃຫ້ໄດ້ 58 ບ້ານ ກວມເອົາ 10,03%.

- ສືບຕໍ່ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາເຊິ່ງຕິດພັນກັບວຽກງານແຂ່ງຂັນຮັກຊາດ ແລະ ພັດທະນາໂດຍສຸມໃສ່ການສ້າງເມືອງໃນ 5 ດ້ານ, ສ້າງບ້ານພັດທະນາ ແລະ ບ້ານຈຸດສຸມໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດຕາມ 4 ເນື້ອໃນ 4 ຄາດໝາຍ; ສ້າງທຸກເງື່ອນໄຂ ເພື່ອໃຫ້ໄດ້ປະກາດແຂວງສາລະວັນ ເປັນແຂວງ ຫົວໜ່ວຍຍຸດທະສາດ ໃນປີ 2025.

**8. ວຽກງານການເມືອງ-ແນວຄິດ ແລະ ວຽກງານກໍ່ສ້າງພັກ-ພະນັກງານ.**

- ສືບຕໍ່ຊຸກຍູ້ໃຫ້ຄະນະພັກແຕ່ລະຂັ້ນຄົ້ນຄ້ວາ, ເຊື່ອມຊຶມ, ເຜີຍແຜ່, ຈັດຕັ້ງຜັນຂະຫຍາຍມະຕິຄຳສັ່ງຂອງພັກ, ຂອງຊາດ ແລະ ກະກຽມເນື້ອໃນສະເຫຼີມສະຫຼອງ ສາມວັນປະຫວັດສາດ ຕິດພັນກັບການກະກຽມດຳເນີນກອງປະຊຸມໃຫຍ່ຄັ້ງທີ X ຂອງອົງຄະນະພັກແຂວງ ໃຫ້ເປັນຂະບວນຟົດຟື້ນ.

- ເອົາໃຈໃສ່ປະຕິບັດແຜນດຳເນີນກອງປະຊຸມໃຫຍ່ X ຂອງອົງຄະນະພັກແຂວງ ໃຫ້ຮັບປະກັນທາງດ້ານເນື້ອໃນ ແລະ ດຳເນີນຕາມເວລາກຳນົດ; ຮັບປະກັນໃຫ້ຜູ້ທີ່ມີຄຸນທາດການເມືອງ - ມີຄວາມຮູ້ຄວາມສາມາດ, ມີມາດຖານ ແລະ ເງື່ອນໄຂຄົບຖ້ວນ; ຮັບປະກັນທາງອາຍຸ, ເພດ, ເຜົ່າ ໃຫ້ມີສັດສ່ວນຖືກຕ້ອງຕາມລະບຽບການກຳນົດ.

- ເອົາໃຈໃສ່ໃນການຄຸ້ມຄອງພະນັກງານ-ລັດຖະກອນ, ມອບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຕິດພັນກັບການປະເມີນຂະບວນການຮັກຊາດ ແລະ ພັດທະນາ ປີ 2025.



ສະແກນດ້ວຍ CamScanner

ຂ. ວຽກຈຸດສຸມ ໃນ 3 ເດືອນ (4, 5, 6) ປີ 2025.

1. ສືບຕໍ່ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນທົ່ວແຂວງ, ຕ້ານ ແລະ ແກ້ໄຂປະກົດການຫຍໍ້ທໍ້ ທີ່ເກີດຂຶ້ນໃນສັງຄົມ; ເພີ່ມທະວີການປ້ອງເວນຍາມສໍານັກງານ-ຫ້ອງການ ແລະ ຈຸດສຸມຕ່າງໆ ເພື່ອກະກຽມໃຫ້ແກ່ກອງປະຊຸມໃຫຍ່ຄັ້ງທີ X ຂອງອົງຄະນະພັກແຂວງ.

2. ສຸມໃສ່ໃນການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ປີ 2025; ດຶງດູດການສົ່ງເສີມການລົງທຶນ ພາກເອກະຊົນ ພາຍໃນ ແລະ ຕ່າງປະເທດໃຫ້ຫຼາຍຂຶ້ນ ຄຽງຄູ່ກັບການຕິດຕາມຄຸ້ມຄອງໂຄງການເຊົ່າ-ສໍາປະທານ, ປຸກລະດົມໃຫ້ປະຊາຊົນ ມີສ່ວນຮ່ວມໃນການພັດທະນາເສດຖະກິດ - ສັງຄົມ ຂອງແຂວງ.

3. ຈັດເກັບລາຍຮັບເຂົ້າງົບປະມານ ງວດທີ 2 ປີ 2025 ໃຫ້ໄດ້ຕາມແຜນ ຫຼື ລື່ນແຜນທີ່ວາງໄວ້; ຄຸ້ມຄອງລາຍຈ່າຍໃຫ້ຖືກຕ້ອງຕາມວິໄນການເງິນ ບົນພື້ນຖານໃຊ້ຈ່າຍຢ່າງປະຢັດຕາມດໍາລັດ 205/ລບ. ປະຕິບັດລາຍຈ່າຍເງິນເດືອນ, ເງິນອຸດໜູນຄ່າຄອງຊີບ ຕາມກະຊວງການເງິນກໍານົດ ເພື່ອເປັນການແກ້ໄຂຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນ, ສືບຕໍ່ປະຕິບັດດໍາລັດ 599/ລບ, ຂໍ້ຕົກລົງ 169/ນຍ ວ່າດ້ວຍ ລົດລັດ ໃຫ້ສໍາເລັດ.

4. ສືບຕໍ່ຈັດຕັ້ງປະຕິບັດ ມະຕິ 04/ກມສພ, 19/ກມສພ, 05/ລບ, 2 ວາລະແຫ່ງຊາດ ແລະ ວຽກງານເຄັ່ງຮ້ອນທາງດ້ານເສດຖະກິດ - ການເງິນ ໃຫ້ເປັນຮູບປະທໍາ ແລະ ລາຍງານປະຈໍາເດືອນ ໃຫ້ສູນກາງຮັບຊາບ ຢ່າງເປັນປົກກະຕິ.

5. ເອົາໃຈໃສ່ໃນການຊຸກຍູ້ ຕິດຕາມການປູກພືດລະດູຝົນ, ຊຸກຍູ້ການຜະລິດເປັນສິນຄ້າ, ສ້າງຕົວແບບດ້ານກະສິກໍາ ໃຫ້ຫຼາຍຂຶ້ນ. ຕິດຕາມ, ກວດກາ, ສະກັດກັ້ນ ແລະ ແກ້ໄຂບັນຫາການລັກລອບຕັດໄມ້, ຊື້-ຂາຍໄມ້ແບບຜິດກົດໝາຍ ພາຍໃນແຂວງ ຢ່າງເຂັ້ມງວດ, ເດັດຂາດ; ຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມຄໍາສັ່ງ 11/ນຍ; ສ້າງແຜນການປູກຕົ້ນໄມ້ໃຫ້ເປັນປ່າ ເນື່ອງໃນໂອກາດ ວັນປູກຕົ້ນໄມ້ແຫ່ງຊາດ ວັນທີ 1 ມິຖຸນາ 2025.

6. ສົ່ງເສີມການຜະລິດເປັນສິນຄ້າທົດແທນການນໍາເຂົ້າໃຫ້ຫຼາຍຂຶ້ນ, ສ້າງເງື່ອນໄຂໃຫ້ຜູ້ປະກອບການຂະໜາດນ້ອຍ, ຂະໜາດກາງໄດ້ເຂົ້າເຖິງແຫຼ່ງທຶນດອກເບ້ຍຕໍ່າ, ຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫຼາດໃຫ້ຢູ່ໃນລະດັບທີ່ກໍານົດໄວ້.

7. ກວດກາສ້ອມແປງເສັ້ນທາງທີ່ເປ່ເພ ໃຫ້ສາມາດທຽວໄດ້ຢ່າງສະດວກ, ປຸກລະດົມປະຊາຊົນມີສ່ວນຮ່ວມໃນການກໍ່ສ້າງເສັ້ນທາງ ເຂົ້າບ້ານ ດ້ວຍທຶນປະຊາຊົນ ໃຫ້ຫຼາຍຂຶ້ນ, ຄຸ້ມຄອງນໍ້າໜັກລົດບັນທຸກ ຕາມມາດຕະຖານທີ່ວາງອອກ. ຈັດຕັ້ງປະຕິບັດໂຄງການກໍ່ສ້າງ ຂົວ - ທາງ ທີ່ມີໃນແຜນ 2025 ໃຫ້ໄດ້ຈັດຕັ້ງປະຕິບັດ ຕາມກໍານົດເວລາ.

8. ສືບຕໍ່ສໍາຫຼວດ ຂຶ້ນທະບຽນສໍາມະໂນທີ່ດິນ ແລະ ອອກໃບຕາດິນໃຫ້ໄດ້ຕາມແຜນທີ່ກໍານົດໄວ້, ຕິດຕາມສະພາບອາກາດ, ຝຸ່ນ PM2,5 ແລະ ແຈ້ງເຕືອນທົ່ວສັງຄົມໃຫ້ຊາບຢ່າງທັນການ; ຈັດສັນເນື້ອທີ່ດິນເຂດປ່າຜະລິດ, ເຂດປະຊາຊົນບຸກລຸກ ເພື່ອຮັບປະກັນໃນການຄຸ້ມຄອງ ພື້ນທີ່ດິນດັ່ງກ່າວ;

9. ສືບຕໍ່ປະຕິບັດການຮຽນ-ການສອນ ຢູ່ບັນດາໂຮງຮຽນແຫ່ງຕ່າງໆທົ່ວແຂວງ ແລະ ຈັດຕັ້ງປະຕິບັດການສອບເສັງພາກຮຽນ 2 ຕາມກໍານົດເວລາ; ປົກຮັກສາສະໜາມກິລາຂອງແຂວງ ແລະ ໂຮງຮຽນແຫ່ງຕ່າງໆ ໃນໄລຍະພັກປິຮຽນ ເພື່ອໃຫ້ໄດ້ນໍາໃຊ້ຢ່າງເປັນປົກກະຕິ ແລະ ຍາວນານ.

10. ສືບຕໍ່ເກັບກໍາຂ່າວ, ຂຽນຂ່າວຕ່າງໆໃຫ້ໄດ້ອອກຂ່າວໃຫ້ສັງຄົມ ໄດ້ຮັບຊາບຢ່າງທົ່ວເຖິງ; ຕິດຕາມ ແລະ ຕອບໂຕ້ ການໂຄສະນາບິດເບືອນ ສ້າງຄວາມເຊື່ອມເສຍ ຕໍ່ການນໍາພາຂອງພັກ, ການຄຸ້ມຄອງລັດ ໃຫ້ທັນການ; ສ້າງບ້ານ ແລະ ຄອບຄົວວັດທະນະທໍາໃຫ້ໄດ້ຕາມແຜນ; ປັບປຸງສະຖານທີ່ທ່ອງທ່ຽວ, ເຮືອນພັກ, ຮ້ານອາຫານ ເພື່ອດຶງດູດນັກທ່ອງທ່ຽວໃຫ້ຫຼາຍຂຶ້ນ.

11. ເຝົ້າລະວັງພະຍາດຕ່າງໆທີ່ອາດຈະເກີດຂຶ້ນໃນຊ່ວງລະດູແລ້ງ, ລະດູຝົນ ແລະ ໂຄສະນາໃຫ້ປະຊາຊົນໄດ້ຮັບຊາບ; ສະໜອງຢາປິ່ນປົວພະຍາດໃຫ້ພຽງພໍ ແລະ ເອົາໃຈໃສ່ໃຫ້ບໍລິການດ້ານສາທາລະນະສຸກໃຫ້ປະຊາຊົນຢ່າງທົ່ວເຖິງ; ປັບປຸງຈັນຍາບັນ, ຈັນຍາທໍາຂອງແພດໝໍ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ປະຊາຊົນ ໃຫ້ດີຂຶ້ນ.

12. ສືບຕໍ່ຄຸ້ມຄອງ ແລະ ເກັບກໍາຂໍ້ມູນແຮງງານພາຍໃນ ແລະ ຕ່າງປະເທດທີ່ມາອອກແຮງງານຢູ່ແຂວງສາລະວັນ ແລະ ຕິດຕາມແຮງງານທີ່ໄປອອກແຮງງານ ຢູ່ຕ່າງປະເທດຢ່າງເປັນປົກກະຕິ, ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານຄວາມດີຕໍ່



ສະແກນດ້ວຍ CamScanner

ປະເທດຊາດ, ເຝົ້າລະວັງອະກີໄພ ແລະ ລົມພະຍຸພັດ ທີ່ອາດຈະເກີດຂຶ້ນໃນລະດູແລ້ງ ແລະ ລະດູຝົນ ປີ 2025. ຂະຫຍາຍການປົກຄຸມປະກັນສັງຄົມໃຫ້ໄດ້ 12 ທີ່ວໜ່ວຍ, ລະດົມບໍລິຈາກເລືອດ ໃຫ້ໄດ້ຕາມແຜນ.

13. ເອົາໃຈໃສ່ໃນການສຶກສາອົບຮົມການເມືອງ - ແນວຄິດ ໃຫ້ພະນັກງານລັດຖະກອນກ່ຽວກັບການປັບປຸງສັບຊ້ອນການຈັດຕັ້ງແຕ່ລະຂັ້ນ ດ້ວຍການຈັດຕັ້ງເຊື່ອມຊຶມເອກະສານສໍາຄັນຂອງພັກ - ຂອງຊາດ ຢ່າງເປັນປົກກະຕິ; ສ້າງຂະບວນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນຂອງອົງການຈັດຕັ້ງມະຫາຊົນໃຫ້ເປັນຂະບວນຟົດຟື້ນ.

14. ສະຫຼຸບປິດຊຸດຮຽນທິດສະດີການເມືອງ ຂັ້ນຕົ້ນ ຮຸ່ນທີ VI ແລະ ຂັ້ນກາງ ຮຸ່ນທີ III ແລະ ສືບຕໍ່ເປີດຊຸດຮຽນທິດສະດີການເມືອງ ຂັ້ນກາງ ຮຸ່ນທີ IV.

15. ສະຫຼຸບວຽກງານຫັນພະນັກງານຫຼັກແຫຼ່ງຂອງແຂວງ ລົງກໍ່ສ້າງຮາກຖານ ຢູ່ 8 ເມືອງ, ສືບຕໍ່ຈັດຕັ້ງປະຕິບັດວຽກງານ 3 ສ້າງ, ວຽກງານແຂ່ງຂັນຮັກຊາດ ແລະ ພັດທະນາ ຕິດພັນກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ; ເກັບກໍາຂໍ້ມູນ ແລະ ວາງແຜນການສ້າງຕາແສງພາຍໃນແຂວງ; ຊຸກຍູ້ ການກໍ່ສ້າງຫ້ອງການບ້ານ ໃຫ້ໄດ້ທຸກບ້ານ ໃນທົ່ວແຂວງ.

16. ສືບຕໍ່ພົວພັນຮ່ວມມືກັບຕ່າງປະເທດ ເພື່ອຍາດແຍ່ງ ແລະ ດຶງດູດການລົງທຶນ; ຄົ້ນຄວ້າເນື້ອໃນ ຢ່າງເປັນເຈົ້າການ ເພື່ອເຂົ້າຮ່ວມກອງປະຊຸມຮັກສາຄວາມເປັນລະບຽບຮຽບຮ້ອຍບໍລິເວນຊາຍແດນ ຄັ້ງທີ 14 ທີ່ ຈັງຫວັດ ອຸບົນ ຣາຊະທານີ ເປັນເຈົ້າພາບ.

17. ເອົາໃຈໃສ່ໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ, ດໍາເນີນ ແລະ ແກ້ໄຂຄະດີດ້ວຍຄວາມຍຸຕິທໍາ; ຈັດຕັ້ງປະຕິບັດການໂຄສະນາ - ເຜີຍແຜ່ກົດໝາຍໃຫ້ໄດ້ຮັບຮູ້ຢ່າງທົ່ວເຖິງ.

18. ຮັບຮອງ ແລະ ກະກຽມ ຈັດພິທີມອບໃບຍັ້ງຢືນ ໜ່ວຍພັກປອດໃສ-ເຂັ້ມແຂງ ແລະ ໜັກແໜ້ນ ປີ 2024 ໃຫ້ຮາກຖານພັກ 8 ເມືອງ ແລະ ອ້ອມຂ້າງແຂວງ.

19. ສ້າງຕາຕະລາງເຄື່ອນໄຫວລະອຽດ ຂອງແຕ່ລະອະນຸກໍາມະການ ໃນການທາບທາມໂຄງປະກອບບຸກຄະລາກອນ, ຮ່າງລາຍງານການເມືອງ, ແຜນພັດທະນາເສດຖະກິດ-ສັງຄົມ ຮອບ 1, ຮອບ 2, ຮອບ 3 ຕິດພັນກັບການດໍາເນີນຊີວິດທ້າຍສະໄໝ ພ້ອມທັງແຜນວຽກຕ່າງໆຂອງແຕ່ລະອະນຸກໍາມະການ ເປັນຕົ້ນ: ເນື້ອໃນ,ເປົ້າໝາຍ, ວາລະ, ພິທີການ, ຄິວແບບ, ສະຖານທີ່ ແລະ ອື່ນໆ ເພື່ອກຽມຄວາມພ້ອມ ກ່ອນການດໍາເນີນກອງປະຊຸມໃຫຍ່ຄັ້ງທີ X ຂອງອົງຄະນະພັກແຂວງ.

20. ກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່ຂອງອົງການຈັດຕັ້ງມະຫາຊົນ ແລະ ສະຫະພັນນັກຮົບເກົ່າແຂວງ ໃຫ້ສໍາເລັດ ຕາມແຜນກໍານົດໄວ້.

21. ປັບປຸງລະບົບການຈັດຕັ້ງຂອງພະແນກການອ້ອມຂ້າງແຂວງ ຕາມມະຕິຂອງຄະນະບໍລິຫານງານສູນກາງພັກ ສະບັບເລກທີ 03/ຄບສພ, ລົງວັນທີ 12 ມີນາ 2025 ແລະ ຄໍາແນະນໍາຂອງຄະນະເລຂາທິການສູນກາງພັກ ເລກທີ 483/ຄລສພ, ລົງວັນທີ 04 ເມສາ 2025.

22. ສືບຕໍ່ແບ່ງຄວາມຮັບຜິດຊອບໃນຄະນະບໍລິຫານງານພັກເມືອງ; ສ້າງໂຄງການດໍາເນີນງານຂອງເມືອງໃຫ້ສໍາເລັດຕາມຈຸດພິເສດຂອງແຕ່ລະເມືອງ ແລະ ນິຕິກໍາກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ.

23. ສືບຕໍ່ຄົ້ນຄວ້າກໍານົດການສ້າງຕັ້ງຕາແສງພາຍໃນແຂວງໃຫ້ເໝາະສົມ ຕາມສະພາບເງື່ອນໄຂຂອງແຂວງ, ກໍານົດທີ່ຕັ້ງ, ບ່ອນເຮັດວຽກ, ບຸກຄະລາກອນ, ງົບປະມານ, ກາຈ້ຳ ແລະ ອື່ນໆ ໃຫ້ມີຄວາມເປັນເອກະພາບ ແລ້ວສະເໜີສູນກາງພິຈາລະນາ.

**III. ມາດຕະການຈັດຕັ້ງປະຕິບັດ**

ເພື່ອເຮັດໃຫ້ທິດທາງລວມ ແລະ ແຜນການ 9 ເດືອນ ປີ 2025 ແລະ ທິດທາງຈຸດສຸມ 3 ເດືອນ (4, 5, 6) ປີ 2025 ບັນລຸຜົນຕາມລະດັບຄາດໝາຍທີ່ວາງໄວ້ ພວກເຮົາຕ້ອງຄົ້ນຄວ້າເຊື່ອມຊຶມຢ່າງເລິກເຊິ່ງ ແລະ ສ້າງຄວາມຮັບຮູ້ເຂົ້າໃຈຢ່າງໜັກແໜ້ນຄື:



ສະແກນດ້ວຍ CamScanner

1. ຄະນະພັກທຸກຂັ້ນ ຕ້ອງເອົາໃຈໃສ່ສືບຕໍ່ຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈ ມະຕິກອງປະຊຸມຄົບຄະນະບໍລິຫານງານພັກແຂວງຄັ້ງທີ 18 ສະໄໝທີ IX ໄປຄົ້ນຄວ້າເຊື່ອມຊຶມ ແລະ ຜັນຂະຫຍາຍ ໃຫ້ເປັນແຜນເຄື່ອນໄຫວ, ແຜນປະຕິບັດງານ, ໂຄງການ ແລະ ກິດຈະກຳລະອຽດ ເພື່ອສູ້ຊົນເຮັດສຳເລັດຕາມຄາດໝາຍ.

2. ຕ້ອງສ້າງແຜນ ແລະ ດຳເນີນການຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດໂດຍຖືເອົາກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ທຸກໆ 3 ເດືອນ ເປັນການສະຫຼຸບຕີລາຄາຜົນສຳເລັດຂອງວຽກງານ.

3. ມອບໃຫ້ບັນດາສະຫາຍຄະນະປະຈຳພັກແຂວງ, ກຳມະການພັກແຂວງ ຜູ້ຊີ້ນຳແຕ່ລະຂົງເຂດ ແລະ ເລຂາພັກເມືອງ ລົງເລິກຊີ້ນຳວຽກທີ່ຕົນຮັບຜິດຊອບ ນຳໄປຈັດຕັ້ງຜັນຂະຫຍາຍ; ພ້ອມທັງຊຸກຍູ້ ຕິດຕາມ ກວດກາການຈັດຕັ້ງປະຕິບັດ ໃຫ້ສຳເລັດຕາມລະດັບຄາດໝາຍ ທີ່ວາງໄວ້.

ຕ. ຄະນະບໍລິຫານງານພັກແຂວງ

(ເລຂາ)

ປອ. ດາວວົງ ພອນແກ້ວ



ສະແກນດ້ວຍ CamScanner